# ການຮຽກຮ້ອງໃນລະດັບໂລກໃຫ້ນຳເອົາມໍລະດົກທາງວັດທະນະທຳ, ສິລະປະ ແລະ ແນວຄວາມຄິດສ້າງສັນເປັນຫົວໃຈຫຼັກທີ່ສຳຄັນໃນການເຄື່ອນໄຫວວຽກງານດິນຟ້າອາກາດ

*ການຮຽກຮ້ອງເພື່ອການປະຕິບັດນີ້ ໄດ້ຖືກເປີດຕົວໃນວັນທີ່ 28 ກັນຍາ 2023*
*ໃນລະຫວ່າງກອງປະຊຸມສຸດຍອດມໍລະດົກວັດທະນະທຳເອີຣົບທີ່ຈັດຂຶ້ນໃນເມືອງເວນິດ ປະເທດອີຕາລີ ທີ່ເວທີປາໄສຊູນມໍລະດົກເອີຣົບ*
*“ການຈິນຕະນາການດ້ານມະນຸດວິທະຍາ: ການວາງວັດທະນະທຳ ແລະ ມໍລະດົກຢູ່ໃນຫົວໃຈຫຼັກຂອງການຫັນປ່ຽນດິນຟ້າອາກາດ*

**ຄວາມຈຳເປັນໃນການຊອກຫາວິທີແກ້ໄຂແບບມີຄວາມສ້າງສັນຕໍ່ກັບການຈັດການສະພາບວິກິດຂອງດິນຟ້າອາກາດຢ່າງກ້າຫານ**

**ພວກເຮົາ, ຜູ້ລົງນາມໃນດ້ານລຸ່ມນີ້, ຂໍໃຫ້ລັດຖະບານແຫ່ງຊາດທີ່ເປັນພາຄີຂອງກອບອານຸສັນຍາຂອງສະຫະປະຊາຊາດວ່າດ້ວຍການປ່ຽນແປງດິນຟ້າອາກາດ (UNFCCC) ແລະ ສັນຍາປາຣີ ເພື່ອຮັບຮອງເອົາມະຕິ “ການເຮັດວຽກງານຮ່ວມກັນດ້ານວັດທະນະທຳ ແລະ ການດຳເນີນການຕໍ່ສະພາບດິນຟ້າອາກາດ” (JWD) ທີ່ COP.**

**ການຕັດສິນໃຈຄັ້ງນີ້ຈະສະທ້ອນໃຫ້ເຫັນເຖິງຄວາມມຸ່ງໝັ້ນຂອງ UNFCCC ເພື່ອເລີ່ມຕົ້ນຂະບວນການປຶກສາຫາລື ທຳຄວາມເຂົ້າໃຈການປະກອບສ່ວນຢ່າງເຕັມທີ່ຂອງວັດທະນະທຳ - ລວມເຖິງມໍລະດົກວັດທະນະທຳ, ສິລະປະ ແລະ ຄວາມສ້າງສັນ - ຕໍ່ກັບການດຳເນີນການຕໍ່ສະພາບອາກາດ. ຂະບວນການດັ່ງກ່າວນີ້ ຈະເປັນການກວດກາວ່າການຕອບສະໜອງຕໍ່ກັບສະພາບດິນຟ້າອາກາດທີ່ນຳພາໂດຍວັດທະນະທຳໃດທີ່ໄດ້ເກີດຂຶ້ນແລ້ວ, ຢູ່ໃສ ແລະ ໂດຍໃຜ; ແບ່ງປັນຄຳແນະນຳສຳລັບການຂະຫຍາຍວິທີແກ້ໄຂຕາມວັດທະນະທຳ ແລະ ຊ່ວຍໃຫ້ແນ່ໃຈວ່າວັດນະທຳໄດ້ຮັບການບູລະນາການເຂົ້າໃນວຽກງານໃນອະນາຄົດຂອງສົນທິສັນຍາຢ່າງສົມບູນ.**

ວັດທະນະທຳມີຄວາມສາມາດຢ່າງຫາສິ່ງປຽບທຽບບໍ່ໄດ້ຕໍ່ການສ້າງໃຫ້ເກີດການປ່ຽນແປງ.

ໃນທຸກສຽງສະທ້ອນ, ມຸມມອງຂອງວັດທະນະທຳອັນຫຼາກຫຼາຍຂອງປວງຊົນທົ່ວທັງໂລກຕໍ່ການສື່ສານທີ່ເລັ່ງດ່ວນໃນການລະດົມຄວາມຮ່ວມມື ແລະ ການສະໜັບສະໜູນວິຖີຊີວິດທີ່ຍືນຍົງຢ່າງຍຸດຕິທຳຜ່ານການມີສ່ວນຮ່ວມຮ່ວມປົກປັກຮັກສາວັດທະນະທຳ ດ້ວຍການແລກປ່ຽນສິນທະນາເລື່ອງເລົ່າຕ່າງໆທີ່ເປັນສິ່ງຈູງໃຈສ້າງໃຫ້ເກີດພາບພົດອັນດີງາມເພື່ອນຳສູ່ການນຳສະເໜີການຈັດຕັ້ງກິດຈະກຳ.

ວັດທະນະທຳໄດ້ສ້າງແຮງບັນດານໃຈໃຫ້ເກີດການລິງມືປະຕິບັດ
ໂດຍສະເພາະຢ່າງຍິ່ງເມື່ອວັດທະນະທຳໄດ້ຮັບການສົ່ງເສີມ ແລະຄວາມເຄົາລົບສິດທິຂອງມັນ.

ການໝູນໃຊ້ຄວາມອາດສາມາດຂອງວັດທະນະທຳທີ່ຫຼາກຫຼາຍ ເຊັ່ນ ພູມປັນຍາຄວາມຮູ້, ການສຶກສາ, ເລື່ອງເລົ່ານິທານ, ສິລະປະ ແລະ ຫັດຖະກຳ, ມໍລະດົກທີ່ຈັບຕ້ອງໄດ້ ແລະ ຈັບຕ້ອງບໍ່ໄດ້ມາລິເລີ່ມການປະດິດສ້າງ ແລະ ຈັດຕັ້ງເປັນແນວທາງເພື່ອຂະຫຍາຍການປະຕິບັດດັ່ງກ່າວໃຫ້ເກີດການປ່ຽນແປງທີ່ຈຳເປັນເພື່ອຮັບມືທັງສອງດ້ານພ້ອມກັນອັນໄດ້ແກ່ ການຮັບມືຕໍ່ວິກິດດິນຟ້າອາກາດ ແລະ ສະພາບວິກິດຕໍ່ຄວາມຫຼາກຫຼາຍຂອງຊີວະນາງພັນ.

ພູມປັນຍາແບບດັ້ງເດີມອັນໄດ້ແກ່ ມໍລະດົກທີ່ຈັບຕ້ອງໄດ້ ແລະ ຈັບຈ້ອງບໍ່ໄດ້ນັ້ນໄດ້ສະແດງໃຫ້ເຫັນເຖິງຄວາມຍືດຍຸ່ນຂອງການດຳລົງຊີວິດຜ່ານກາລະເວລາອັນຍາວຍານໂດຍການໝູນວຽນ ແລະ ຟື້ນຟູດ້ວຍເຕັກໂນໂລຢີຂອງທຳມະຊາດເອງເຮັດໃຫ້ຫຼຸດຜ່ອນທາດກາສພິດກາກບອນໃນອາກາດ; ແກ້ໄຂບັນຫາໃນທຸກງສ່ວນຂອງສະພາບແວດລ້ອມທີ່ເກີດຂື້ນເອງ ແລະ ສະພາບແວດລ້ອມຕາມທຳມະຊາດທາງດ້ານກະສິກຳ, ພະລັງງານເພື່ອການດູແລເບິ່ງແຍງທີ່ຢູ່ອາໄສໃນຊຸມຊົນ

ການຍຶດຖືຄຸນຄ່າຂອງຄວາມເປັນມະນຸດຮ່ວມກັນ, ສ້າງຄວາມສາມັກຄີ, ໃຫ້ຄວາມເອົາໃຈໃສ່ ແລະ ຄວາມເຄົາລົບນັບຖືເຊິ່ງກັນແລະກັນຈາກບັນດາຄວາມພະຍາຍາມຂອງບັນດາສິນລະປິນ, ຜູ້ເຄື່ອນໄຫວກິດຈະກຳເຊີງສ້າງສັນ, ນັກອອກແບບ, ສະຖາບັນສົ່ງເສີມວັດທະນະທຳ ແລະ ມໍລະດົກ ແລະ ສັງຄົມພົນລະເຮືອນ ໄດ້ເຕົ້າໂຮມເອົາຜູ້ຊ່ຽວຊານ ແລະ ອາສາສະໝັກຕະຫຼອດຮອດນັກວິຊາການ ແລະ ຜູ້ຮັກສາພູມປັນຍາຂອງບັນພະບູລຸດມາຮ່ວມກັນເພື່ອນຳມາສູ່ການກຳນົດນະໂຍບາຍສູ່ຊຸມຊົນໃຫ້ຮັບຊາບ ສ້າງເປັນປາກົດການທີ່ໂດດເດັ່ນເພື່ອນຳສະເໜີວິໄສທັດ ແລະ ກໍລະນີສຶກສາຂອງອະນາຄົດແບບຍືນຍົງທີ່ປາສະຈາກການເພິ່ງພານ້ຳມັນເຊື້ອໄຟ, ຟື້ນຟູຊີວະນາງພັນ ແລະ ສະໜັບສະໜູນຄວາມຍຸຕິທຳໃນສັງຄົມ.

ການປະຕິບັດການຫັນປ່ຽນດິນຟ້າອາກາດໂດຍອີງຕາມວັດທະນະທຳເປັນຖານຊ່ວຍສົ່ງເສີມທາງອອກຂອງບັນຫາແບບທ້ອງຖິ່ນສຳລັບແກ້ໄຂບັນຫາລະດັບສາກົນ, ຫຼຸດຜ່ອນຊ່ອງຫວ່າງໃນການວາງແຜນການດ້ານສະພາບອາກາດໃນປັດຈຸບັນຜ່ານຍຸດທະສາດແບບສູນກາງ, ບົດບາດຕາມສິດທິ, ລະບຸພື້ນທີ່ສະເພາະເຈາະຈົງ, ຮັບຊາບສະພາບອຸປະສັງ ແລະ ຍຶດຖືຜູ້ຄົນເປັນໃຈກາງພາຍໃຕ້ຂອບເຂດການເຮັດວຽກທີ່ຕະໜັກເຖິງການເພິ່ງພາອາໄສເຊິ່ງກັນ ແລະ ກັນຂອງທຸກຝ່າຍ ແລະ ທຸກງສິ່ງທີ່ມີຊີວິດ.

ເຖິງແມ່ນວ່າຈະຂາດການເນັ້ນໜັກຢ່າງພຽງພໍຕໍ່ບົດບາດຄວາມສຳຄັນຂອງວັດທະນະທຳໃນນະໂຍບາຍຂອງສະພາບອາກາດ ແລະ ການລະດົມທຶນສະໜັບສະໜູນຢ່າງເປັນທາງການກໍ່ຕາມ ແຕ່ສຽງຮຽກຮ້ອງຂອງສິລະປະ ແລະ ມໍລະດົກຍັງຄົງຢູ່ໃນແຖວໜ້າເພື່ອການສ້າງຄວາມປ່ຽນແປງພ້ອມກັນທັງ 3 (ສີຂຽວ, ດິຈິຕອລ ແລະ ສັງຄົມ), ການສະແຫວງຫາຫົນທາງສູ່ ອຸນຫະພູມ 1.5 ອົງສາ ແລະ ການປ່ຽນແປງລະບົບ. ຢ່າງໃດກໍ່ດີ, ການຂາດການຍອມຮັບນະໂຍບາຍຢ່າງເປັນທາງການຢ່າງຕໍ່ເນື່ອງ ສຸດທ້າຍແລ້ວໄດ້ສ້າງຄວາມເສຍຫາຍຕໍ່ການມີສ່ວນຮ່ວມທີ່ສຳຄັນຂອງວັດທະນະທຳ ແລະ ປະສິດທິພາບຂອງການປະຕິບັດການດ້ານສະພາບອາກາດໂລກ.

"ການເຮັດວຽກຮ່ວມກັນ" (Joint Work) ແມ່ນຂະບວນການທີ່ໄດ້ຮັບການຍອມຮັບໂດຍ COP ເຊິ່ງສາມາດຮຽກຮ້ອງໃຫ້ກອງເລຂາ UNFCCC ແລະ ອົງການຍ່ອຍອື່ນໆຮ່ວມກັນແກ້ໄຂບັນຫາຊ່ອງຫວ່າງທີ່ສໍາຄັນ ແລະ ທີ່ຂາດຫາຍໄປ ໃນກໍລະນີນີ້ແມ່ນຈຸດຕັດກັນຂອງວັດທະນະທໍາ ແລະ ການເຄື່ອນໄຫວດ້ານດິນຟ້າອາກາດ ເຊິ່ງຈະເປັນການປູທາງໄປສູ່ການຮັບຮອງໃນໂຄງການເຮັດວຽກທີ່ສໍາຄັນຂອງ COP ຕໍ່ໄປ ໂດຍກໍານົດໃຫ້ວັດທະນະທໍາ ແລະ ມໍລະດົກເປັນຫົວໃຈຂອງນະໂຍບາຍສະພາບອາກາດ, ການວາງແຜນແລະການດໍາເນີນການ.

ໂຄງການໃນອະນາຄົດດັ່ງກ່າວ
ຈະຊຸກຍູ້ຄວາມສົນໃຈຕໍ່ເງື່ອນໄຂທີ່ເອື້ອອໍານວຍວັດທະນະທໍາສັງຄົມຕໍ່ກັບການປະຕິບັດການຂອງການຫັນປ່ຽນດິນຟ້າອາກາດ ແລະ ສະຫນັບສະຫນູນການບັນເທົາຜົນກະທົບ ແລະ ການປັບຕົວໃຫ້ມີປະສິດທິພາບຫຼາຍຂຶ້ນ. ໃນຂະນະດຽວກັນ, ຍັງລະບຸເຖິງປະເດັນສໍາຄັນທີ່ເສຍເສຍຫາຍແລະສູນເສຍກ່ຽວກັບວັດທະນະທໍາແລະມໍລະດົກທີ່ໄດ້ຜ່ານການຍອມຮັບແລ້ວໃນແຜນການຈັດຕັ້ງປະຕິບັດ Sharm El Sheikh ໃນ COP 27. ໃນສ່ວນສຸດທ້າຍ, ສິ່ງນີ້ຈະຍັງສະຫນັບສະຫນູນຄວາມພະຍາຍາມຂອງທົ່ວໂລກເພື່ອເຮັດໃຫ້ວັດທະນະທໍາເປັນຈຸດໃຈກາງຂອງການພັດທະນາແບບຍືນຍົງຂອງການຫັນປ່ຽນດິນຟ້າອາກາດ.

ການເຊື່ອມໂຍງສຽງຂອງວັດທະນະທໍາເຂົ້າໃນນະໂຍບາຍການຫັນປ່ຽນດິນຟ້າອາກາດສາກົນຈະຊ່ວຍຍົກໃຫ້ເຫັນແນວທາງມໍລະດົກ, ສິລະປະ ແລະ ຄວາມຄິດສ້າງສັນໂດຍການນໍາພາຂອງທ້ອງຖິ່ນເອງທີ່ສະເໜີການແກ້ໄຂວິກິດການຫັນປ່ຽນດິນຟ້າອາກາດ.
ນອກນີ້ຍັງສະໜັບສະໜູນວຽກງານຂອງຊົນເຜົ່າພື້ນເມືອງທີ່ສະໜັບສະໜູນວັດທະນະທໍາການດູແລຕົ້ນກໍາເນີດຂອງໂລກ. ທັງໝົດນີ້, ເປັນສິ່ງທີ່ເຮັດໃຫ້ປະຊາຄົມວັດທະນະທໍາທົ່ວໂລກທີ່ອຸດົມສົມບູນແລະມີຄວາມຫຼາກຫຼາຍສາມາດເວົ້າດ້ວຍສຽງອັນໜຶ່ງອັນດຽວທີ່ຈະແຈ້ງ ແລະ ເປັນເອກະພາບ, ເຊິ່ງຈະລະດົມບັນດາເຄືອຂ່າຍວັດທະນະທໍາ, ມໍລະດົກ, ສິລະປະ ແລະ ການປະດິດສ້າງຂອງທົ່ວໂລກ, ສັງຄົມພົນລະເຮືອນ, ສະຖາບັນ ແລະ ອົງການສາທາລະນະໃນແຕ່ລະລະດັບທັງໝົດເພື່ອສະໜັບສະໜູນ UNFCCC ໃນພາລະກິດອັນສໍາຄັນຂອງຕົນ.

ເພື່ອຮັບມືກັບການຫັນປ່ຽນຂອງດິນຟ້າອາກາດ,
ພວກເຮົາຕ້ອງບຸກທະລຸຂອງຄວາມອາດສາມາດການຫັນປ່ຽນຂອງວັດທະນະທໍາ - ຈາກສິລະປະໄປສູ່ມໍລະດົກເພື່ອສ້າງຈິນຕະນາການໃຫ້ຜູ້ຄົນ ແລະ ຕະໜັກເຖິງການປ່ອຍຄາບອນໃຫ້ຕໍ່າ, ຄວາມຍືດຍຸ່ນຂອງສະພາບດິນຟ້າອາກາດ ແລະ ເພື່ອອະນາຄົດ.

*ພວກເຮົາທີ່ໄດ້ລົງຊື່ຮ່ວມກັນ*
*ເຂົ້າຮ່ວມການຮຽກຮ້ອງໃຫ້ບັນດາຜູ້ແທນເຂົ້າຮ່ວມກອງປະຊຸມດິນຟ້າອາກາດຂອງສະຫະປະຊາຊາດຮັບຮອງເອົາມະຕິຕົກລົງການເຮັດວຽກຮ່ວມກັນ*
*ເຊິ່ງຈະເຮັດໃຫ້ໂລກກ້າວໄປສູ່ການຍອມຮັບວັດທະນະທໍາເປັນເສົາຄໍ້າຫຼັກທີ່ຂາດບໍ່ໄດ້ຂອງການປະຕິບັດການຫັນປ່ຽນດິນຟ້າອາກາດທີ່ມີມີປະສິດທິພາບ ແລະ ຄວາມຍຸດຕິທໍາຫຼາຍຂຶ້ນ.*

_______________ [ຜູ້ລົງຊື່]

**ເວບິສ ຮຽກຮ້ອງໃຫ້ນຳເອົາມໍລະດົກທາງວັດທະນະທຳ, ສິລະປະ ແລະ ແນວຄວາມຄິດສ້າງສັນເປັນຫົວໃຈຫຼັກທີ່ສຳຄັນໃນການເຄື່ອນໄຫວວຽກງານດິນຟ້າອາກາດ**

<u>ເນື້ອຫາທີ່ສຳຄັນ, ຕາຕະລາງເວລາການລົບນະລົງ ແລະ ຄຳຖາມທີ່ພົບຫຼາຍທີ່ສຸດ</u>

<u>ເນື້ອຫາທີ່ສຳຄັນ</u>

**ພວກເຮົາຕ້ອງການຮຽກຮ້ອງເຖິງຫຍັງ?**

ພວກເຮົາຕ້ອງການຮຽກຮ້ອງໃຫ້ໜ່ວຍງານລັດຖະບານແຫ່ງຊາດ ທີ່ເປັນພາຄີຂອງ ສົນທິສັນຍາສະຫະປະຊາຊາດ ວ່າດ້ວຍການປ່ຽນແປງດິນຟ້າອາກາດ (UNFCCC) ແລະ ຂໍ້ຕົກລົງໃນສົນທິສັນຍາປາຣີ ໃຫ້ມີການຮັບຮອງ 'ການຕັດສິນໃຈເຮັດວຽກຮ່ວມກັນດ້ານວັດທະນະທຳ ແລະ ການເຄື່ອນໄຫວດ້ານດິນຟ້າອາກາດ' (JWD) ເຂົ້າໃນການປະຊຸມການປ່ຽນແປງດິນຟ້າອາກາດຂອງສະຫະປະຊາຊາດ ທີ່ເອີ້ນວ່າ ກອງປະຊຸມຂອງບັນດາພາຄີ ຫຼື "COP".

**ສິ່ງນັ້ນຄືຫຍັງ?**

JWD ແມ່ນການຮຽກຮ້ອງຈາກພາກສ່ວນ ໜ່ວຍງານລັດຖະບານແຫ່ງຊາດ ທີ່ຄຸ້ມຄອງ UNFCCC ແລະ ນະໂຍບາຍວຽກງານດິນຟ້າອາກາດລະດັບສາກົນ, ໄປຍັງວິຊາການຂອງ UNFCCC ແລະ ອົງການວິຊາການພາຍໃນເຄືອຄ່າຍ UNFCCC

ເພື່ອຮ່ວມກັນແກ້ໄຂບັນຫາທີ່ກ່ຽວຂ້ອງກັບວັດທະນະທຳທີ່ລວມທັງ ສິລະປະ ແລະ ມໍລະດົກ, ລວມທັງ ການຈັດສຳມະນາ ແລະ ການປະຊຸມຂອງບັນດາຜູ້ຊ່ຽວຊານ, ການເຮັດວຽກເພື່ອປະກອບວຽກງານທີ່ຢູ່ພາຍໃຕ້ UNFCCC ກໍຄືກັນກັບ ບັນດາອົງການຈັດຕັ້ງທົ່ວໄປທີ່ມີຄວາມສົນໃຈໃນການປະກອບຄຳເຫັນເພື່ອການພິຈາລະນາ ແລະ ການຮັບຮອງເອົາເງື່ອນໄຂຂອງ JWD ເພື່ອໃຫ້ຖືກນຳໄປປຶກສາຫາລືໃນລາຍລະອຽດເພີ່ມເຕີມດ້ານລຸ່ມນີ້.

## ເປັນຫຍັງເລື່ອງນີ້ຈຶ່ງມີຄວາມສຳຄັນ?

ການຕັດສິນໃຈເຮັດວຽກຮ່ວມກັນແມ່ນຈະເປັນການເປີດຮັບຂະບວນການເພື່ອ:

- ຊຸກຍູ້ການດຳເນີນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ໂດຍການລິເລີ່ມໃຊ້ປະໂຫຍດຈາກເຄື່ອງມືທາງສັງຄົມ ແລະ ວັດທະນະທຳທີ່ເຮັດໃຫ້ເກີດການປ່ຽນແປງການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ.
- ນຳໃຊ້ອົງປະກອບທາງວັດທະນະທຳ ແລະ ມໍລະດົກເຂົ້າໃນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ເພື່ອຂະຫຍາຍຂອບວຽກງານສູ່ລະດັບໂລກ.
- ສ້າງນະໂຍບາຍທີ່ມີອິດທິພົນ ແລະ ການປຶກສາຫາລືດ້ານການປັບໂຕເຂົ້າກັບສະພາບອາກາດຂອງເຮົາທີ່ມີການປ່ຽນແປງ, ການກ້າວສູ່ການປ່ອຍອາຄາບອນໃຫ້ເປັນສູນ (Net Zero), ການສະໜັບສະໜູນອົງປະກອບທາງວັດທະນະທຳ ແລະ ມໍລະດົກ ເພື່ອການຫັນປ່ຽນປະສົບການການຮຽນຮູ້, ການຄຸ້ມຄອງທາງມໍລະດົກ ແລະ ວັດທະນະທຳ ແລະ ອື່ນໆ.
- ການຮອມໂຕ ແລະ ເສີມສ້າງພະລັງທາງວັດທະນະທຳຜ່ານການຮອມກັນຊຸກຍູ້ຕໍ່ການຕັດສິນໃຈບັນຫາໃນດ້ານນີ້.

## ພວກເຮົາໝາຍເຖິງຫຍັງໃນດ້ານວັດທະນະທຳ?

ການລົບນະລົງຄັ້ງນີ້ແມ່ນພິຈາລະນາເຖິງແນວຄິດດ້ານວັດທະນະທຳໃນຄວາມໝາຍທີ່ກວ້າງທີ່ສຸດ.

ວັດທະນະທຳແມ່ນຮອບຮອມເອົາ ສິລະປະ (ປະກອບມີ ຄຳເວົ້າ,ວັນນະຄະດີ, ດົນຕີ, ສິລະປະ, ແລະ ການສະແດງສິລະປະ ແລະ ອື່ນໆ), ແນວຄວາມຄິດສ້າງສັນ (ປະກອບມີ ຮູບເງົາ, ໂທລະພາບ ແລະ ການອອກອາກາດ), ການອອກແບບ ແລະ ແຟຊັ່ນ, ແລະ ດິຈິຕອລ.

ມໍລະດົກ ແມ່ນການເຂົ້າໃຈເຖິງມິຕິຂອງວັດທະນະທຳທີ່ຖືກສ້າງເປັນອົງປະກອບຈາກເຫດການໃນອະດີດທີ່ຖືວ່າສຳຄັນໃນປະຈຸບັນລວມໄປເຖິງອະນາຄົດ, ການຄວບຄຸມສິ່ງທີ່ຈັບຕ້ອງໄດ້, ຈັບຕ້ອງບໍ່ໄດ້, ເຄື່ອນຍ້າຍໄດ້ ແລະ

ເຄື່ອນຍ້າຍບໍ່ໄດ້, ສາລະຄະດີ ແລະ ມໍລະດົກທາງວັດທະນະທໍາ. ອີກທັງລວມເຖິງສະຖານທີ່, ພູມສັນຖານ, ອະນຸສອນສະຖານ, ວັດຖຸ ແລະ ເຄື່ອງສະສົມ. ອີກທັງຍັງລວມໄປເຖິງຄວາມຮູ້ທີ່ເປັນທີ່ສືບສານມາຈາກປະສົບການຂອງມະນຸດ ແລະ ອະດີດຂອງມະນຸດ. ບັນດາຄວາມຮູ້ເຫຼົ່ານີ້ຍ່ອມເປັນສິ່ງຂັບເຄື່ອນ ແລະ ສາມາດສ້າງໃໝ່ໄດ້ຢ່າງສະໝ່ຳສະເໝີຈາກບັນດາຊຸມຊົນ ແລະ ກຸ່ມຄົນທີ່ມີການຕອບສະໜອງຕໍ່ສະພາບແວດລ້ອມ ແລະ ປະຫວັດສາດຂອງພວກເຂົາ. ເຊິ່ງມັນກໍເປັນການສະທ້ອນທີ່ຮວມເອົາຄວາມຮູ້ທີ່ຮ່ວມສະໄໝໃນດ້ານສິ່ງແວດລ້ອມ, ພູມສັນຖານ, ການຄຸ້ມຄອງຊັບພະຍາກອນທີ່ພັດທະນາໃນຄົນຮຸ່ນຕໍ່ມາຈາກກຸ່ມຄົນພື້ນເມືອງ ແລະ ກຸ່ມຄົນທ້ອງຖິ່ນ, ຮູບແບບ ແລະ ກິດຈະກໍາ ທີ່ພັດທະນາໃນໂລກທີ່ທັນສະໄໝ, ຮວມທັງປະຫວັດສາດຂອງບັນດາລັດທິອານານິຄົມ, ທຶນນິຍົມ ແລະ ອຸດສາຫະກໍາ. ມໍລະດົກທາງວັດທະນະທໍາແມ່ນໄດ້ມີການບັນທຶກການສ້າງສັນກິດຈະກໍາຂອງມະນຸດຜ່ານຊ່ວງເວລາ ແລະ ທຸກຮູບແບບຂອງມໍລະດົກເພື່ອອົງປະກອບທີ່ສ້າງສັນໃນຍຸກປະຈຸບັນ.

## ມຸມມອງທີ່ກວ້າງກວ່ານັ້ນແມ່ນຫຍັງ?

ໃນແງ່ຂອງວັດທະນະທໍາ ແມ່ນການວິເຄາະເພື່ອຊອກຫາແນວທາງການແກ້ໄຂບັນຫາທີ່ເປັນຫາຍະນະຕໍ່ດິນຟ້າອາກາດ. ມັນໄດ້ເປັນການສ້າງບົດບາດອັນສໍາຄັນໃນຊີວິດຂອງເຮົາ. ມັນສາມາດເປັນແຮງບັນດານໃຈໃຫ້ເກີດການປ່ຽນແປງ, ປ່ຽນຄວາມຮູ້ສຶກ ແລະ ຄວາມນຶກຄິດ ແລະ ການສ້າງແນວທາງໃນການດໍາລົງຊີວິດຮູບແບບໃໝ່. ການຮັບຮອງເອົາ JWD ຈະເປັນການຈັດຕັ້ງປະຕິບັດທີ່ສໍາຄັນຢ່າງຍິ່ງຕໍ່ການປ່ຽນແປງໃນສັງຄົມ ໂດຍການຮັບຮູ້ດ້ານວັດທະນະທໍາ, ມໍລະດົກ ແລະ ສິລະປະ ທີ່ປະສົມປະສານໃນຊີວິດຂອງມະນຸດ, ການສະແດງອອກ, ຄວາມເຊື່ອ ແລະ ອຸປະນິໄສ. ດັ່ງນັ້ນ, ການປະສົມປະສານເພື່ອການຍອມຮັບເອົາການປ່ຽນແປງຈຶ່ງເປັນສິ່ງຈໍາເປັນຕໍ່ອະນາຄົດທີ່ດີຂຶ້ນ.

## ທ່ານສາມາດປະກອບສ່ວນຫຍັງໄດ້ແດ່?

ຖ້າຫາກທ່ານຮັບຮູ້ວ່າວັດທະນະທໍາແມ່ນຖືເປັນເສົາຄ້ຳທີ່ຈໍາເປັນຕໍ່ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ, ການເຂົ້າຮ່ວມເພື່ອສະໜັບສະໜູນ ແລະ ແບ່ງປັນກັບເຄືອຄ່າຍ ແລະ ຊຸມຊົນຂອງທ່ານ.

- ຮ່ວມແບ່ງປັນຂ່າວສານກ່ຽວກັບການລົນນະລົງໃຫ້ກັບບຸກຄົນ ແລະ ອົງກອນທີ່ມີຄວາມອາດສາມາດສົ່ງ ສານໄປຍັງລັດຖະບານ ທີ່ເປັນຜູ້ຕັດສິນໃຈຂັ້ນສຸດທ້າຍ.

- ຮ່ວມແບ່ງປັນຂ່າວສານກ່ຽວກັບການລົນນະລົງດ້ວຍກະບອກສຽງທາງວັດທະນະທຳທີ່ຫຼາກຫຼາຍ ແລະ ຈູງໃຈໃຫ້ພວກເຂົາມີແນວຄວາມຄິດໃນການລິເລີ່ມຕັ້ງແຕ່ຕອນນີ້, ເພື່ອການປະກອບສ່ວນສິ່ງທີ່ພວກເຂົາຕ້ອງການສ້າງຂຶ້ນໃຫ້ກັບໂລກໃບນີ້. ໃນລະດັບຂອງສະຫະປະຊາຊາດ ກໍຄວນມີການຈັດຕັ້ງການໃຫ້ຄໍາປຶກສາເພື່ອມຸ່ງເນັ້ນໄປຍັງການປະກອບສ່ວນຢ່າງເຕັມທີ່ທາງດ້ານວັດທະນະທຳໃນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ, ລວມທັງລະບຸຄວາມພ້ອມຕໍ່ແນວທາງການນໍາພາວັດທະນະທໍາເຂົ້າສູ່ການແກ້ໄຂບັນຫາດິນຟ້າອາກາດຄວນມີການເກີດຂຶ້ນຢູ່ໃສ ແລະ ດ້ວຍວິທີການໃດ, ມີສ່ວນຮ່ວມໂດຍໃຜ. ອີກປະການໜຶ່ງ, ກໍຄືການສ້າງຄໍາແນະນໍາໃນການຮອມໂຕງກງານຍຸດທະສາດດ້ານສິລະປະ, ວັດທະນະທຳ ແລະ ອົງປະກອບທາງດ້ານມໍລະດົກເຂົ້າສູ່ການຂັບເຄື່ອນດ້ານດິນຟ້າອາກາດໃນນະໂຍບາຍຂອງສົນທິສັນຍາ UNFCCC ແລະ ແຜນງານໃນອະນາຄົດ.

## ແມ່ນໃຜເປັນຜູ້ຮ່ວມມື ແລະ ແມ່ນໃຜເປັນຜູ້ເຂົ້າຮ່ວມໃນການລົນນະລົງຄັ້ງນີ້?

ການລົນນະລົງໃນຄັ້ງນີ້ແມ່ນເພື່ອສໍາລັບທຸກຄົນທີ່ມີຄວາມສົນໃຈເປັນສ່ວນໃນການເສີມສ້າງກະບອກສຽງທາງດ້ານວັດທະນະທຳ, ຜູ້ຈັດຕັ້ງປະຕິບັດ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການຕໍ່ສູ້ຕ້ານກັບບັນຫາການປ່ຽນແປງດິນຟ້າອາກາດ. ເຊິ່ງໝາຍເຖິງທຸກຄົນທີ່ຢູ່ໃນຂົງເຂດພາກສ່ວນທາງດ້ານວັດທະນະທຳ, ມໍລະດົກ, ສິລະປະ ແລະ ຄວາມບັນເທີງ, ລວມໄປເຖິງ ນັກສິລະປະ ແລະ ສ້າງສັນ, ສະຖາບັນທາງດ້ານວັດທະນະທຳ, ໜ່ວຍງານຂອງລັດຖະບານໃນທຸກລະດັບ, ທຸລະກິດລາຍຍ່ອຍ ແລະ ບໍລິສັດອອກແບບ, ອົງການຈັດຕັ້ງ, ມະຫາວິທະຍາໄລ ແລະ ສະຖາບັນການສຶກສາ, ອົງການຈັດຕັ້ງຂອງກຸ່ມຄົນຊົນເຜົ່າ ແລະ ພາກສ່ວນບຸກຄົນ. ອີກທັງຍັງລວມໄປເຖິງນັກເຄື່ອນໄຫວທາງດ້ານສິ່ງແວດລ້ອມ ແລະ ດິນຟ້າອາກາດ ເຊິ່ງຖືເປັນຜູ້ທີ່ຮັບຮູ້ໄດ້ວ່າມີຄວາມສາມາດໃນການກໍານົດຂອບວຽກງານທາງດ້ານວັດທະນະທຳຕໍ່ກັບຫາຍະນະຂອງດິນຟ້າອາກາດ ທີ່ມີຄວາມຈໍາເປັນໃນການກອບກູ້ສະພາບການຂອງໂລກກັບຄືນມາໃຫ້ເໝືອນດັ່ງເດີມເພື່ອເປັນໄປຕາມຄາດໝາຍຂອງສົນທິສັນຍາປາຣີ.

ຝ່າຍປະທານກອງປະຊຸມ COP27 ແມ່ນໄດ້ມີການວາງແຜນກິດຈະກໍາຈັດກອງປະຊຸມລະດັບສູງ (ກໍານົດຊ່ວງກອງປະຊຸມ COP ໄວ້ໃນ ວັນທີ 08 ທັນວາ 2023) ທີ່ສາມາດນໍາແນວຄິດ JWD ໄປສູ່ການເຈລະຈາໄດ້. ເຊິ່ງແນວຄິດ JWD ແມ່ນສາມາດຕໍ່ຍອດແນວທາງວັດທະນະທຳ Kashi ທີ່ມີການນໍາໃຊ້ພາຍໃນເດືອນ ສິງຫາ ທີ່ກອງປະຊຸມຄະນະລັດຖະມົນຕີ G20 ໃນອິນເດຍ, ທີ່ສາມາດສັງເກດໄດ້ວ່າ ‘ຄວາມກັງວົນຕໍ່ການຂະຫຍາຍໂຕທາງວັດທະນະທຳແມ່ນໄດ້ຖືກຍົກປະເດັນຂຶ້ນມາໃນເນື້ອໃນຂອງກອງປະຊຸມ ສະຫະປະຊາຊາດຕໍ່ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ກອງປະຊຸມ COP, ໂດຍການສ້າງໂອກາດເພື່ອການປະຕິບັດທີ່ກ່ຽວຂ້ອງດ້ານວັດທະນະທຳ ແລະ

ລະບົບຄວາມຮູ້, ລວມໄປເຖິງຄວາມຮູ້ ແລະ ການປະຕິບັດໃນຂັ້ນທ້ອງຖິ່ນ ແລະ ພື້ນເມືອງ, ການແຈ້ງເຕືອນຍຸດທະສາດການປັບໂຕ ແລະ ການຫຼຸດຜ່ອນ ແລະ ສ້າງແຜນງານທີ່ກໍາເປັນແນວທາງການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ'.

<u>ຄໍາຖາມທີ່ພົບຫຼາຍທີ່ສຸດ</u>

## COP ແມ່ນຫຍັງ?

COP (COP ແມ່ນກອງປະຊຸມໄລຍະສັ້ນສໍາລັບບັນດາພາຄີ) ເຊິ່ງເປັນກອງປະຊຸມທີ່ມີການຈັດຂຶ້ນໃນທຸກປີ ໂດຍອົງການສະຫະປະຊາຊາດ.
ບັນດາປະເທດທີ່ກ່ຽວຂ້ອງແມ່ນມີການໃຫ້ຄໍາໝັ້ນສັນຍາຕໍ່ການປະຕິບັດຕາມແບບແຜນຂອງສົນທິສັນຍາສາກົນທີ່ເອີ້ນວ່າ ສົນທິສັນຍາ ສະຫະປະຊາຊາດ ວ່າດ້ວຍການປ່ຽນແປງດິນຟ້າອາກາດ (UNFCCC). ໂດຍ COP 28 ແມ່ນໄດ້ມີການຈັດຕັ້ງຂຶ້ນພາຍໃນເດືອນ ທັນວາ 2023 ທີ່ເມືອງ ດູໄບ, ສະຫະລັດອາຣັບເອມີເຣດ.

## ມີຫຍັງເກີດຂຶ້ນໃນ COP 27?

ໃນເດືອນ ພະຈິກ 2022, COP 27 ແມ່ນໄດ້ນໍາສະເໜີຂ່າວສານທີ່ໜ້າສົນໃຈ ແລະ ຖືເປັນໄຊຊະນະໃນຄັ້ງປະຫວັດສາດຕໍ່ການເຄື່ອນໄຫວອົງກາງານດ້ານດິນຟ້າອາກາດຢ່າງສ້າງສັນ.
ເຊິ່ງນັບວ່າເປັນຄັ້ງທໍາອິດ ທີ່ທາງບັນດາລັດຖະບານແຫ່ງຊາດໄດ້ມີການຮອບຮອມມໍລະດົກທາງວັດທະນະທໍາໄວ້ໃນຖະແຫຼງການກ່ຽວກັບ 'ຄວາມສູນເສຍ ແລະ ຄວາມເສຍຫາຍ' ແລະ 'ການປັບໂຕ'.

ເຄືອຄ່າຍມໍລະດົກດ້ານດິນຟ້າອາກາດ (CHN) ແລະ ຄູ່ຮ່ວມງານ ແມ່ນໄດ້ມອບໝາກຜົນສໍາເລັດອັນສໍາຄັນຕໍ່ການສ້າງຄວາມໝັ້ນໃຈໃນການຮັບເອົາວັດທະນະທໍາໃຫ້ກາຍເປັນຊັບສິນບັດທີ່ຄວນໄດ້ຮັບການປົກປ້ອງຈາກຜົນກະທົບດ້ານການປ່ຽນແປງດິນຟ້າອາກາດ ແລະ ເປັນຊັບພະຍາກອນເພື່ອສ້າງຄວາມເຂັ້ມແຂງຕໍ່ການປ່ຽນແປງໃຫ້ກັບຊຸມຊົນ.

## ຄວາມໝາຍຂອງການລົບນະລົງຄັ້ງນີ້ແມ່ນຫຍັງ?

ມາຮອດປະຈຸບັນ,
ການເຄື່ອນໄຫວອົງກາງານດ້ານວັດທະນາທໍາຕໍ່ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດແມ່ນໄດ້ຖືກນໍາພາເຄື່ອນໄຫວໃນຫຼາຍພື້ນທີ່ໂດຍ ບັນດາສັງຄົມ ແລະ ບັນດາອົງການທີ່ບໍ່ແມ່ນລັດ. JWD ກໍຍຶດໝັ້ນທີ່ຈະບໍ່ຂໍປ່ຽນແປງເລື່ອງດັ່ງກ່າວ. ຢ່າງໃດກໍຕາມ ແນວຄວາມຄິດນີ້ແມ່ນເພື່ອການຖ່າຍທອດມຸມມອງທາງທັດສະນະສິລະປະ, ວັດທະນະທໍາ, ແລະມໍລະດົກເຂົ້າສູ່ນະໂຍບາຍການປ່ຽນແປງດິນຟ້າອາກາດ

ທີ່ສາມາດສົ່ງເສີມໂດຍພາກສ່ວນນະໂຍບາຍດ້ານການປ່ຽນແປງດິນຟ້າອາກາດສາກົນ ທີ່ອີງໃສ່ການສົ່ງເສີມວັດທະນະທຳທ້ອງຖິ່ນໂດຍການຊ່ວຍສະໜັບສະໜູນນະໂຍບາຍ ແລະ ການສະໜອງທຶນທີ່ມີປະໂຫຍດຕໍ່ວຽກງານນີ້. ທັງໝົດນີ້ຈະຊ່ວຍປັບປຸງປະສິດທິພາບຂອງການວາງແຜນ ແລະ ການປະຕິບັດວຽກງານດ້ານດິນຟ້າອາກາດ.

## ແມ່ນໃຜທີ່ເປັນຜູ້ນຳພາແຮງຜັກດັນຄັ້ງນີ້ໄປສູ່ລະດັບລັດຖະບານແຫ່ງຊາດ?

ໃນລະດັບລັດຖະບານແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ COP28 ຄາດວ່າການນຳພາແຮງຜັກດັນໃນຄັ້ງນີ້ແມ່ນຈະຖືກນຳພາໂດຍ ກຸ່ມພັນທະມິດໃໝ່ທີ່ເຄື່ອນໄຫວວຽກງານທາງດ້ານວັດທະນະທຳຕໍ່ການການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດຂອງ UNFCCC (GRCBCA), ທີ່ເປັນແນວຮ່ວມແບບບໍ່ເປັນທາງການຂອງປະເທດສະມາຊິກ UNFCCC.

## ແມ່ນເປັນທີ່ເປັນຜູ້ມີອິດທິພົນຕໍ່ການຕັດສິນໃຈ?

ເຖິງແມ່ນວ່າ ທາງເລືອກໃນການຕັດສິນໃຈຢ່າງເດັດຂາດ ແມ່ນຈະຕ້ອງເກີດຂຶ້ນຈາກການຮ່ວມຕັດສິນໂດຍບັນດາລັດທີ່ສະມາຊິກ, ແຕ່ຜູ້ທີ່ບໍ່ແມ່ນພາກສ່ວນລັດຖະບານກໍມີບົດບາດສຳຄັນເຊັ່ນດຽວກັນ. ນັ້ນຈຶ່ງຕ້ອງມີການຮອບຮອມບັນດາລັດຖະບານທ້ອງຖິ່ນ ແລະ ອຳນາດການປົກຄອງເທດສະບານ, ພາກສ່ວນປະຊາສັງຄົມ ທີ່ຖືກຈັດຢູ່ໃນສະຖາບັນທາງວັດທະນະທຳ, ອຸດສາຫະກຳການສ້າງສັນ, ອຸດສາຫະກຳການອອກແບບ ແລະ ຊ່າງຝີມື, ມະຫາວິທະຍາໄລ ແລະ ການວິໄຈ, ຜູ້ຊ່ຽວຊານດ້ານວັດທະນະທຳ ແລະ ມໍລະດົກ, ແລະ ນັກເຄື່ອນໄຫວ ແລະ ຜູ້ສະໜັບສະໜູນ.

## ຖ້າການຕັດສິນໃຈເຮັດວຽກຮ່ວມກັນນີ້ສາມາດບັນລຸໄດ້ຈະມີຄວາມຫມາຍຄືແນວໃດ?

ການຕັດສິນໃຈ 'ເຮັດວຽກຮ່ວມກັນ' ເປັນຂະບວນການທີ່ຮັບຮູ້ວ່າ ການປະຊຸມລະດັບລັດຖະບານແຫ່ງຊາດໃນ COP ແມ່ນສາມາດປະຕິບັດຕາມສິ່ງທີ່ຄວນຄຳນຶງເຖິງເຊັ່ນ:

- ການຕັດສິນໃຈເຮັດວຽກຮ່ວມກັນໃນຮູບແບບໃໝ່ ແມ່ນມີຜົນຕໍ່ການສະໜອງບົດບາດແບບຖາວອນ ໃຫ້ກັບຫົວຂໍ້ ຫຼື ບັນດາຂະແໜງການ ເຊັ່ນ ການສົນທະນາດ້ານວັດທະນະທຳຕໍ່ກັບຂົງເຂດດິນຟ້າອາກາດ ແລະ ການເຮັດວຽກກັບໜ່ວຍງານດິນຟ້າອາກາດ ຂອງສະຫະປະຊາຊາດ (the UNFCCC).
- ການຈັດຕັ້ງງານສຳມະນາ ແລະ ກອງປະຊຸມຂອງບັນດາຊ່ຽວຊານ, ເຊິ່ງຂະບວນການດັ່ງກ່າວຈະສາມາດນຳໄປສູ່ການພິຈາລະນາເຖິງຄວາມບອບບາງຂອງມໍລະດົກທາງວັ

ດທະນະທຳ ຕໍ່ການປ່ຽນແປງດິນຟ້າອາກາດ ແລະ ການກ້າວໄປສູ່ການຂັບເຄື່ອນທາງວັດທະນະທຳ ແລະ ມໍລະດົກ ຕໍ່ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ.

- ຈຸດປະສົງຂອງຂະບວນການໃນຄັ້ງນີ້ກໍເພື່ອສ້າງຄຳແນະນຳເພື່ອໃຫ້ເກີດການພິຈາລະນາ ແລະ ການຮັບຮອງ ໃນກອງປະຊຸມ COP 29 ໃນປີ 2024. ຕາມຫຼັກການ, ແຜນງານນີ້ຖືເປັນວຽກງານທີ່ຄອບຄຸມຢູ່ໃນ ສົນທິສັນຍາ UNFCCC ໃນການບຸກລະດົມຕໍ່ຂອບເຂດທາງດ້ານວັດທະນະທຳໄປສູ່ການແກ້ໄຂບັນຫາດ້ານການປ່ຽນແປງດິນຟ້າອາກາດ.

ການລິເລີ່ມວຽກງານ JWD ກໍແມ່ນເພື່ອຊອກຫາແນວທາງໃນສົນທິສັນຍາ UNFCCC ແລະ ໂຄງຮ່າງສະບັບຍ່ອຍ ຕໍ່ການຮ່ວມລິເລີ່ມຂະບວນການປຶກສາຫາລືພາຍໃນໜຶ່ງປີ ເພື່ອລະບຸບັນຫາທີ່ກ່ຽວຂ້ອງໃນຮູບແບບຂອງ ສິລະປະ, ວັດທະນະທຳ ແລະ ມໍລະດົກ ຜ່ານການ ສຳມະນາ ແລະ ກອງປະຊຸມຂອງບັນດາຊ່ຽວຊານ, ໃນການພິຈາລະນາເຖິງຄວາມບອບບາງຂອງມໍລະດົກທາງວັດທະນະທຳ ຕໍ່ການປ່ຽນແປງດິນຟ້າອາກາດ ແລະ ການກ້າວໄປສູ່ການຂັບເຄື່ອນທາງວັດທະນະທຳ ແລະ ມໍລະດົກ ຕໍ່ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ.
ອີກທັງເປັນການສ້າງແຮງຈູງໃຈທີ່ສຳຄັນໂດຍພາກສ່ວນທີ່ບໍ່ແມ່ນລັດຖະບານເຂົ້າໃນຂະບວນການປຶກສາຫາລື. ພວກເຮົາມີຄວາມຄາດຫວັງວ່າຂະບວນການນີ້ຈະເປັນການຮວມໂຕເພື່ອໃຫ້ມີການຍື່ນຄຳຮ້ອງໄປຍັງ ສົນທິສັນຍາ UNFCCC ເພື່ອເອົາແນວຄວາມຄິດທີ່ເປັນຈຸດຕັດກັນລະຫວ່າງວັດທະນະທຳ ແລະ ການແກ້ໄຂບັນຫາດ້ານການປ່ຽນແປງດິນຟ້າອາກາດ
ໃຫ້ຖືເປັນໂອກາດອັນສຳຄັນໃນການແຊກແຊງໄປຍັງບັນດາກອງປະຊຸມວິທະຍາສາດ
ທີ່ສາມາດເປີດການປະຊຸມເພື່ອປຶກສາຫາລືຕໍ່ກັບບັນຫາດັ່ງກ່າວນີ້.

ຫົວຂໍ້ດັ່ງກ່າວແມ່ນຈະຖືກນຳໄປສົນທະນາໃນຊ່ວງຂອງການປຶກສາຫາລືດັ່ງຕໍ່ໄປນີ້:

- ພະລັງຂອງວັດທະນະທຳທີ່ຮອບຮວມເອົາ ການເຄື່ອນໄຫວທາງດ້ານສິລະປະ, ຄວາມສ້າງສັນ, ມໍລະດົກ ແລະ ລະບົບຄວາມຮູ້ທາງດ້ານຮີດຄອງປະເພນີ, ເພື່ອເປັນການຊ່ວຍໃຫ້ຄົນສາມາດຈິນຕະນາການ ແລະ ຄຳນຶງເຖິງການບໍລິໂພກແບບຍືນຍົງ ແລະ ຮູບແບບການຜະລິດ, ການປ່ອຍຄາບອນໃນປະລິມານທີ່ຕໍ່າ, ແລະ ການສ້າງອະນາຄົດທີ່ຍືດຢຸ່ນຕໍ່ດິນຟ້າອາກາດ.

- ການເຄື່ອນໄຫວທາງດ້ານວັດທະນະທຳ ແລະ ມໍລະດົກ ເຊັ່ນການໃຊ້ເຕັກໂນໂລຊີທາງດ້ານສິ່ງແວດລ້ອມແບບຮ່ວມສະໄໝ ແລະ ນຳໃຊ້ລະບົບດັ່ງກ່າວເຂົ້າໃນການຫຼຸດຜ່ອນການປ່ອຍອາຍເຮືອນແກ້ວ.
- ຂົງເຂດວຽກງານທາງດ້ານວັດທະນະທຳ ແລະ ມໍລະດົກ ຈະເປັນການຍົກລະດັບຄວາມອາດສາມາດໃນການປັບໂຕ, ການສ້າງຄວາມເຂັ້ມແຂງຢ່າງຍືດຢຸ່ນ ແລະ ການຫຼຸດຜ່ອນຄວາມບອບບາງຕໍ່ການປ່ຽນແປງດິນຟ້າອາກາດ ແລະ

ຜົນກະທົບທີ່ຕາມມາຈາກໄພອັນຕະລາຍຂອງດິນຟ້າອາກາດ ຕໍ່ກັບວັດທະນະທໍາ ແລະ ມໍລະດົກທີ່ມີຕໍ່ຄວາມຍືດຢຸ່ນຂອງກຸ່ມຄົນ ແລະ ຊຸມຊົນ.

- ການເຮັດວຽກຮ່ວມກັນ ແລະ ການແລກປ່ຽນເພື່ອການຄຸ້ມຄອງທາງດ້ານວັດທະນະທໍາ ແລະ ມໍລະດົກ ແລະ ສ້າງຄວາມປ່ຽນແປງຕໍ່ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ.
- ການມີບົດບາດທາງດ້ານວັດທະນະທໍາ ແລະ ມໍລະດົກເພື່ອຫຼີກລ່ຽງການປັບໂຕຢ່າງບໍ່ເໝາະສົມ ແລະ ການບັນເທົາຜົນກະທົບທີ່ຂາດຕົກບົກຜ່ອງ.
- ຂົງເຂດວຽກງານດ້ານເສດຖະກິດ-ສັງຄົມ ແລະ ວັດທະນະທໍາເພື່ອສ້າງຄວາມຍືດຢຸ່ນດ້ານດິນຟ້າອາກາດຕໍ່ການພັດທະນາຢ່າງຍືນຍົງ.

## ສິ່ງທີ່ຈະເກີດຂຶ້ນໃນຕໍ່ມາແມ່ນຫຍັງ?

ໃນຂະບວນການປຶກສາຫາລືໃນໄລຍະເວລາໜຶ່ງປີດ້ວຍການເລີ່ມດໍາເນີນການດ້ວຍແຜນງານ JWD ຈະສາມາດປະສົບຜົນສໍາເລັດໄດ້ນັ້ນ, ພວກເຮົາແມ່ນມີຄວາມຕ້ອງການສ້າງແຮງຈູງໃຈທີ່ເຂັ້ມແຂງ ແລະ ການສ້າງຄວາມຮ່ວມມືຈາກ ກະບອກສຽງຂອງວັດທະນະທໍາ ແລະ ມໍລະດົກໃນຫຼາຍກຸ່ມ. ຄວາມຄິດສ້າງສັນຂອງທຸກຄົນແມ່ນມີຄວາມຈໍາເປັນຕໍ່ການແບ່ງປັນຜ່ານວິໄສທັດຂອງ UNFCCC ເພື່ອຫາວິທີທາງໃນການປົດລ໋ອກພະລັງຂອງວັດທະນະທໍາເພື່ອຊ່ວຍໃຫ້ຜູ້ຄົນສາມາດຈິນຕະນາການ ແລະ ຄໍານຶງເຖິງ
ຕົວເມືອງທີ່ມີການປ່ອຍຄາບອນຕໍ່າທີ່ມີຜົນໃນອະນາຄົດຕໍ່ສະພາບດິນຟ້າອາກາດທີ່ມີຄວາມຍືດຢຸ່ນ. ການມີສ່ວນຮ່ວມສ້າງຂະບວນການປຶກສາຫາລືແຜນງານ JWD ແມ່ນລິເລີ່ມໄດ້ດ້ວຍມີສ່ວນຮ່ວມໃນການເຂົ້າຮ່ວມລົງນະລົງເພື່ອຮັກສາແຜນງານ JWD. ຫຼາຍພາກສ່ວນທີ່ບໍ່ໄດ້ຂຶ້ນກັບລັດຖະບານ ກໍລ້ວນແລ້ວແຕ່ມີບົດບາດອັນສໍາຄັນໃນການມີສ່ວນຮ່ວມສະໜັບສະໜູນວັດຖຸປະສົງຂອງແຜນງານ JWD ຈາກລະດັບລັດຖະບານແຫ່ງຊາດ ແລະ ເລີ່ມຕົ້ນເວລາການເຄື່ອນໄຫວວຽກງານນັບຕັ້ງແຕ່ຕອນນີ້.

## ການລົງນາມເພື່ອຮຽກຮ້ອງໃຫ້ມີການເຄື່ອນໄຫວນັ້ນ ທ່ານຈະຕ້ອງມີການຍິນຍອມດ້ານໃດແດ່?

ພຽງແຕ່ທ່ານຍິນຍອມໃຫ້ຊື່ຂອງພວກເຮົາຖືກສະແດງຕໍ່ສາທາລະນະຢູ່ໃນເວັບໄຊທ໌ ແລະ ການສ້າງຜົນປະໂຫຍດການລົນນະລົງອື່ນໆ ດ້ວຍການສະໜັບສະໜູນຢ່າງເຕັມທີ່ໃນການລົນນະລົງ ແລະ ເປັນຜູ້ລົງນາມໃນຈົດໝາຍເພື່ອຮຽກຮ້ອງໃຫ້ມີການເຄື່ອນໄຫວ.

**ຜູ້ທີ່ເປັນຜູ້ລົງນາມການກໍ່ຕັ້ງນີ້ແມ່ນຈະຖືກຍັ້ງຍືນອີກເທື່ອໜຶ່ງພາຍໃນວັນທີ 30 ຕຸລາ.**

ຍົກຕົວຢ່າງເຊັ່ນ:

## CHN

ເຄືອຄ່າຍນໍລະດົກດ້ານດິນຟ້າອາກາດ (CHN) ແມ່ນມີຄວາມສະໝັກໃຈໃນການສ້າງໜ່ວຍຈາກລັດຖະບານຮ່ວມກັນ, ອົງກອນທີ່ບໍ່ຂຶ້ນກັບລັດຖະບານ, ມະຫາວິທະຍາໄລ, ຫຼືໜ່ວຍທຸລະກິດ ແລະ ອົງການ ທີ່ເປັນເຄືອຄ່າຍສະໜັບສະໜູນຂ່ວມກັນ ເພື່ອໃຫ້ຄຳໝັ້ນສັນຍາໃນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ນຳພາຄວາມມຸ່ງໝັ້ນໃນການບັນລຸເປົ້າໝາຍຂອງ ສົນທິສັນຍາປາຣີ.

## Julie's Bicycle

Julie's Bicycle ເປັນອົງກອນທີ່ບໍ່ສະແຫວງຫາຜົນກຳໄລທີ່ມີການບຸກເບີກການລະດົມເອົາສິລະປະ ແລະ ວັດທະນະທຳເຂົ້າເປັນສ່ວນໜຶ່ງໃນການເຄື່ອນໄຫວແກ້ໄຂບັນຫາວິກິດການຂອງດິນຟ້າອາກາດ, ທຳມະຊາດ ແລະ ຄວາມຍຸດຕິທຳ. ເຊິ່ງມີການຈັດຕັ້ງອົງກອນຂຶ້ນໃນປີ 2007, ເຊິ່ງໂຄງການນີ້ແມ່ນມີຕົ້ນກຳເນີດມາຈາກອຸດສາຫະກຳດ້ານສຽງເພງ. ເຊິ່ງປະຈຸບັນ ກໍໄດ້ມີການເຮັດວຽກຢູ່ໃນບັນດາຂົງເຂດທີ່ກ່ຽວຂ້ອງທາງດ້ານວັດທະນະທຳ, ໂຄງການນີ້ແມ່ນໄດ້ເປັນຄູ່ຮ່ວມມືກັບຫຼາຍກວ່າ 2000 ອົງກອນ ໃນສະຫະລາຊະອານະຈັກອັງກິດ ແລະ ໃນລະດັບສາກົນ. ເຊິ່ງເພີ່ມມີການຮອບຮອມບັນດານັກຊ່ຽວຊານດ້ານວັດທະນະທຳ ແລະ ສິ່ງແວດລ້ອມ, ທາງໂຄງການກໍໄດ້ສຸມໃສ່ໂຄງການທີ່ຈະສ້າງຜົນກະທົບຂະໜາດໃຫຍ່ ແລະ ການປັບປ່ຽນນະໂຍບາຍ ເພື່ອໃຫ້ຕອບສະໜອງກັບວິກິດການທາງດິນຟ້າອາກາດ. ພວກເຮົາແມ່ນມີບົດບາດຢູ່ໃນໃຈກາງຂອງເຄືອຂ່າຍທີ່ບໍ່ເປັນທາງການຂອງຜູ້ຄົນທີ່ມີວິໄສທັດຮ່ວມກັນກັບພວກເຮົາ, ອີກທັງສະໜັບສະໜູນການເຄື່ອນໄຫວອື່ນໆໂຄງການຂອງພວກເຂົາ ແລະ ຊ່ວຍກະຕຸ້ນໂຄງການໃຫມ່ໆທີ່ມີຈຸດຕັດກັນລະຫວ່າງວັດທະນະທຳ ແລະ ສິ່ງແວດລ້ອມ. juliesbicycle.com

ການເຕົ້າໂຮມເມືອງ ແລະ ລັດຖະບານທ້ອງຖິ່ນ (UCLG – United Cities and Local Government). ເປັນເຄືອຄ່າຍລະດັບໂລກທີ່ນຳສະເໜີ ແລະ ປົກປ້ອງຜົນປະໂຫຍດຂອງລັດຖະບານທ້ອງຖິ່ນ ແລະ ລະດັບໂລກ. UCLG (www.uclg.org) ແມ່ນການຮອມໂຕຂອງກະບອກສຽງ ແລະ ຜູ້ສະໜັບສະໜູນລະດັບໂລກໃຫ້ແກ່ການປົກຄອງຕົນເອງໃນຂັ້ນທ້ອງຖິ່ນທີ່ເປັນລະບົບປະຊາທິປະໄຕ, ການສົ່ງເສີມທາງຄ່ານິຍົມ, ວັດຖຸປະສົງ ແລະ ຄວາມສົນໃຈ, ຜ່ານການຮ່ວມມືລະຫວ່າງລັດຖະບານທ້ອງຖິ່ນ

ແລະ ພາຍໃນເຄືອຄ່າຍຊຸມຊົນລະດັບສາກົນທີ່ກວ້າງຂຶ້ນ. ຕັ້ງແຕ່ມີການລິເລີ່ມສ້າງພາຍໃນເດືອນ ພຶດສະພາ 2004 ໃນນາມ ຜູ້ສືບທອດການເຄື່ອນໄຫວຈາກເທດສະບານສາກົນເກົ່າຂອງຍຸກທົດສະວັດ, ເຊິ່ງມີຫຼາຍກວ່າ 240,000 ຊຸມຊົນ, ເມືອງ, ລະດັບພູມີພາກ ແລະ ຂັ້ນສູນກາງ, ພ້ອມທັງຫຼາຍກວ່າ 175 ສະມາຄົມລັດຖະບານຂັ້ນທ້ອງຖິ່ນ ແລະ ລະດັບພູມີພາກ ແມ່ນໄດ້ມີການເຂົ້າຮ່ວມເຄືອຄ່າຍລະດັບໂລກນີ້. ULCG ແມ່ນໄດ້ຮັບຮອງເອົາ “ສົນທິສັນຍາສຳຫຼັບອະນາຄົດຂອງມະນຸດຊະຍາຊົນ 2022, ໂດຍການທີ່ສະມາຊິກ ULCG ແລະ ເຂດເລືອກຕັ້ງຂອງລັດຖະບານທ້ອງຖິ່ນ ແລະ ລັດຖະບານໃນເຂດພູມີພາກ ແມ່ນໄດ້ຍ້ຳຄືນເຖິງຄຳໝັ້ນສັນຍາຂອງພວກເຂົາໃຫ້ການສ້າງພະລັງຂອງການດຳເນີນງານຮ່ວມກັນ, ການເສີມສ້າງພະລັງ, ການຮ່ວມເປັນເຈົ້າການ, ການຮ່ວມເສີມສ້າງ ແລະ ການຮ່ວມມືລະດັບສາກົນ ແລະ ເສີມສ້າງຄວາມສາມັກຄີ ທີ່ເປັນຮາກຖານອັນສຳຄັນໃນການສາມັກຄີ ແລະ ສ້າງສັງຄົມທີ່ຍືນຍົງ.

**ICOMOS** - ເປັນຄະນະກຳມະການສາກົນດ້ານອະນຸສອນສະຖານ ແລະ ທີ່ຕັ້ງເມືອງ, ທີ່ມີສະມາຊິກຈາກອົງກອນໃນທົ່ວໂລກຫຼາຍກວ່າ 10,000 ຄົນ ໃນ 108 ປະເທດ ທີ່ມີການເຮັດວຽກດ້ວຍຄວາມສະໝັກໃຈເພື່ອການປົກປັກຮັກສາມໍລະດົກທາງວັດທະນະທຳໃນທົ່ວທຸກຮູບແບ ບ ທັງແບບທີ່ຈັງຕ້ອງໄດ້ ແລະ ຈັບຕ້ອງບໍ່ໄດ້. ICOMOS ແມ່ນໄດ້ມີຄວາມປະສົບຜົນສຳເລັດໃນການພັດທະນາຢ່າງໝັ້ນຄົງໃນຂົງເຂດນະໂຍບາຍການປ່ຽນແປງດິນຟ້າ ອາກາດ. ICOMOS ໄດ້ສະແດງບົດບາດອັນສຳຄັນຕໍ່ການສ້າງຄວາມເຂັ້ມແຂງໃນເຂດການເລືອກຕັ້ງທີ່ມີສະມາຊິກຫຼາຍກວ່າ 11,000 ຄົນ, ຜ່ານການເຮັດໜ້າທີ່ຫຼາຍກວ່າ 100 ຄະນະກຳມະການລະດັບຊາດ, ຄະນະກຳມະການທາງວິທະຍາສາດສາກົນ 30 ທ່ານ ແລະ ຄະນະປະຕິບັດງານຫຼາຍກຸ່ມ. ໂດຍສະເພາະ, ICOMOS ຈະມີການກວດສອບການສເພະເໜີຊື່ ແລະ ໃຫ້ຄຳແນະນຳກັບຜູ້ຊ່ຽວຊານກ່ຽວກັບສະຖານະພາບໃນການອະນຸລັກຊັບສິນຂອງມໍລະດົກໂລກ. ໃນການສ້າງຄວາມເຂັ້ມແຂງນີ້ ທາງໜ່ວຍງານກໍເຮັດໜ້າທີ່ເປັນທີ່ປຶກສາຢ່າງເປັນທາງການໃຫ້ກັບຄະນະກຳມະການມໍລະດົກໂລກ, ປະກອບສ່ວນຢ່າງແຂ່ງຂັນໃນການເຮັດຕາມພັນທະສັນຍາຂອງ ສົນທິສັນຍາມໍລະດົກໂລກ UNESCO, ໂດຍສະເພາະເຈາະຈົງກ່ຽວກັບບັນຫາດ້ານການປ່ຽນແປງດິນຟ້າອາກາດ.

**Eurocitites** - ມີເຄືອຄ່າຍຫຼາຍກວ່າ 200 ຕົວເມືອງ ໃນ 38 ປະເທດ ທີ່ເປັນຕົວແທນໃຫ້ກັບ 130 ລ້ານຄົນ ໃນການເຮັດວຽກຮ່ວມກັນຕັ້ງແຕ່ປີ 1986 ເພື່ອຮັບປະກັນໃນການສ້າງຄຸນະພາບຊີວິດທີ່ດີໃຫ້ກັບທຸກຄົນ. ໂດຍຜ່ານເວທີປາໄສທີ່ຫຼາກຫຼາຍ (ລວມທັງເວທີປາໄສວັດທະນະທຳ), ຄະນະປະຕິບັດງານ, ໂຄງການແລະກິດຈະກຳຕ່າງໆ, Eurocities ນຳສະເໜີເວທີສຳລັບການສົ່ງເສີມບົດບາດຂອງຕົວເມືອງໃນການວາງນະໂຍບາຍຂອງເອີຣົບ ແລະ ສຳລັບການແບ່ງປັນຄວາມຮູ້ ແລະ ການແລກປ່ຽນວິທີແກ້ໄຂໃໝ່ໃນບັນດາຕົວເມືອງສະມາຊິກຂອງຕົນ.

ການລົບນະລົງອອກມາຮຽກຮ້ອງຂອງ Eurocities Lille, ກໍຄືການເຊື້ອເຊີນບັນດາເຈົ້າເມືອງໃຫ້ຄໍາຫມັ້ນສັນຍາໃນການພັດທະນານະໂຍບາຍວັດທະນະທໍາທ້ອງຖິ່ນ ແລະ ກິດຈະກໍາທີ່ມີຄວາມຍືນຍົງຢ່າງຄອບຄຸມ ແລະ ໃຫ້ຄວາມສົນໃຈທີ່ສໍາຄັນ, ມີຫຼາຍກວ່າ 30 ອໍານາດການປົກຄອງທ້ອງຖິ່ນໃຫ້ຄໍາຫມັ້ນສັນຍາຈົນເຖິງປະຈຸບັນ. ໂດຍການລົງນາມ, ບັນດາຕົວເມືອງເຫຼົ່ານີ້ ໃຫ້ຄໍາຫມັ້ນສັນຍາເຊື່ອມໂຍງຈິດສໍານຶກດ້ານສິ່ງແວດລ້ອມ ແລະ ສັງຄົມເຂົ້າໃນບັນດາການເຄື່ອນໄຫວກິດຈະກໍາດ້ານວັດທະນະທໍາ ແລະ ນະໂຍບາຍຂອງພວກເຂົາ.

**Fondazione di Venezia** ເປັນມູນນິທິການກຸສົນຂອງອີຕາລີ ທີ່ເປັນຕົ້ນກໍາເນີດທະນາຄານສ້າງຕັ້ງຂຶ້ນໃນ 1992 ໃນເມືອງ ເວນິສ. ບັນດາໂຄງການ ແລະ ແຫຼ່ງຊັບພະຍາກອນຂອງໂຄງການແມ່ນປະກອບສ່ວນຢ່າງບໍ່ຢຸດຢັ້ງໃນການກໍ່ສ້າງມໍລະດົກວັດທະນະທໍາ, ການຄົ້ນຄ້ວາວິທະຍາສາດ, ການສຶກສາຂອງຊາວຫນຸ່ມ, ການປົກປັກຮັກສາສິ່ງແວດລ້ອມ ແລະ ປະຊາຊົນ. ມູນນິທິແມ່ນໄດ້ສ້າງ ແລະ ສະຫນັບສະຫນູນໂຄງການທີ່ໃຫ້ຄຸນຄ່າກັບບັນດາຂົງເຂດ, ແລະ ການສ້າງແນວຄວາມຄິດ ແລະ ຍຸດທະສາດນະວັດກໍາ, ສົ່ງເສີມການສຶກສາ, ສິລະປະ ແລະ ຄວາມຍືນຍົງຂອງສັງຄົມ. ສິ່ງທີ່ສໍາຄັນຂອງໂຄງການທີ່ດໍາເນີນໂດຍມູນນິທິ ເວນິສ ແມ່ນເມືອງ M9 ໃນ ເມສທຣີ (Mestre), ໂຄງການພັດທະນາ ແລະ ການຟື້ນຟູຕົວເມືອງ ແລະ ສັງຄົມຂະຫນາດໃຫຍ່ທີ່ກ່ຽວຂ້ອງກັບສະພາບຕົວເມືອງທີ່ຖືກປະຖິ້ມໄວ້ຂະຫນາດໃຫຍ່ຢູ່ໃນໃຈກາງເມືອງ, ປະຈຸບັນຕົວເມືອງດັ່ງກ່າວແມ່ນມີຊີວິດຊີວາ ດ້ວຍໂຄງການ M9 - Museo del '900: ພິພິທະພັນດິຈິຕອນທີ່ໃຫຍ່ທີ່ສຸດໃນອິຕາລີກ່ຽວກັບປະຫວັດສາດແລະວັດທະນະທໍາຂອງປະເທດ.

## ແຜນງານການລົບນະລົງ JWD

### ຄວາມປະສົບຜົນສໍາເລັດຈະເກີດຂຶ້ນໃນຮູບແບບໃດ?

- ການໃຫ້ອໍານາດຕໍ່ຜູ້ທີ່ມີອິດທິພົນທີ່ຈະສາມາດສະຫັບສະຫນູນໃຫ້ກັບແຜນງານ JWD ທີ່ຈະມີການເຂົ້າຮ່ວມປະຊຸມໃນທີ 8 ເດືອນ ທັນວາ.

- ການບຸກລະດົມຄວາມຮັບຮູ້ໃນການຮ່ວມປະຊຸມ JWD ໃນວັນທີ 8 ທັນວາ ແລະ ການໂຄສະນາໂດຍທົ່ວໄປກັບຜູ້ຮັບຊົມທີ່ຫຼາກຫຼາຍຈາກທົ່ວທຸກຂະແໜງ ແລະ ທົ່ວໂລກ.
- ການຮວມຮວມບັນດາຂະແໜງການຕ່າງໆໃນການສະໜັບສະໜູນການສົນທະລົງ ແລະ ການສ້າງຄວາມເຂົ້າໃຈອັນຈະແຈ້ງ, ການສ້າງຄວາມຕື່ນເຕັ້ນ ແລະ ຄວາມສົນໃຈຕໍ່ກັບບັນກາທີ່ສຳຄັນ.

**<u>ການຕັດສິນໃຈເຮັດວຽກຮ່ວມກັບຈາສາມາດເຮັດໃຫ້:</u>**

- ສາມາດຄວາມເຂັ້ມແຂງໃນການເຄືອນໄຫວອວຽກງານດິນຟ້າອາກາດດ້ວຍຂະບວນການທີ່ເປັນທາງການເພື່ອຮັດກຸມເຄື່ອງມືທາງດ້ານສັງຄົມ ແລະ ວັດທະນະທຳທີ່ສາມາດສ້າງຄວາມປ່ຽນແປງໃນການຂັບເຄື່ອນວຽກງານດິນຟ້າອາກາດ.
- ສ້າງອົງປະກອບທາງວັດທະນະທຳ ແລະ ມໍລະດົກໃຫ້ແກ່ການເຄື່ອນໄຫວອວຽກງານດິນຟ້າອາກາດ ເພື່ອຍົກລະດັບໃນທົ່ວໂລກ.
- ມີອິດທິພົນຕໍ່ນະໂຍບາຍຫຼັກໆ ແລະ ການສົນທະນາກ່ຽວກັບການປັບຕົວເຂົ້າກັບດິນຟ້າອາກາດຂອງພວກເຮົາທີ່ມີການປ່ຽນແປງ,

  ເຂົ້າຫາການປ່ອຍຄາບອນເປັນສູນ,

  ຊຸກຍູ້ໃຫ້ການປ່ຽນແປງປະສົບການການຮຽນຮູ້ທີ່ອີງໃສ່ວັດທະນະທຳ ແລະ ມໍລະດົກ,

  ການປົກປ້ອງມໍລະດົກ ແລະ ວັດທະນະທຳ ແລະ ອື່ນໆອີກ.

  •

  ສ້າງຄວາມເຂັ້ມແຂງໃຫ້ແກ່ຂະແໜງວັດທະນະທຳໂດຍຜ່ານການຮ່ວມກັນເພື່ອມີອິດທິພົນຕໍ່ການຕັດສິນໃຈໃນຂົງເຂດນີ້.

# <u>ແຜນຕາຕະລາງວຽກຂອງການລົນນະລົງ</u>

23 ຕຸລາ - ການເປີດຕົວຢ່າງບໍ່ທາງການຕໍ່ຜູ້ລົງນາມດ້ວຍການລົງຊື່ເຂົ້າໃຊ້ດ້ວຍເຕັກໂນໂລຊີທີ່ບໍ່ທັນສະໄໝຮ່ວມກັບສະມາຊິກ CHN , ສະມາຊິກ ECCA ທັງໝົດ, ການຖະແຫຼງການທາງວັດທະນະທຳ ແລະ ອື່ນໆ.

ວັນທີ 30 ເດືອນຕຸລາ - ສຳເລັດການເລີ່ມຕົ້ນການລົງນາມຂອງຜູ້ລົງນາມ.

ວັນທີ 18 ຕຸລາ - ວັນທີ 3 ພະຈິກ - ການກະກຽມຊັບສິນທາງສື່ສັງຄົມ ແລະ ເຄື່ອງມືການຕະຫຼາດໃນຂັ້ນສຸດທ້າຍຂອງການລົນນະລົງ

ວັນພຸດທີ 6 ພະຈິກ - ເປີດໂຕການລົນນະລົງແບບສາທາລະນະ

ວັນຈັນທີ 6 ພະຈິກຫາວັນທີ 13 ທັນວາ - ດຳເນີນຂະບວນການ ແລະ ສ້າງແຮງພັກດັນໃຫ້ສອດຄ່ອງກັບສະພາບການທີ່ພວມພັດທະນາ.

ວັນທີ 6-7 ທັນວາ - ລະບຸກິດຈະກຳເພີ່ມເຕີມ ແລະ ກະບອກສຽງ - ແລະ ສ້າງກຳລັງແຮງໃຫ້ແກ່ກອງປະຊຸມລັດຖະມົນຕີໃນວັນທີ 8 ທັນວາ.

ວັນທີ 8 ເດືອນທັນວາ – ກອງປະຊຸມລັດຖະມົນຕີ JWD ທີ່ COP28